ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
-----===000===-----

ເລກທີ: 206 -
ນະຄອນຫຼວງວຽງຈັນ, ວັນທີ: 03 FEB 2020

ມະຕິກອງປະຊຸມສະພາບໍລິຫານ ສະໄໝວິສາມັນ ຄັ້ງທີ 2/2020

ກອງປະຊຸມສະພາບໍລິຫານບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ (ພກພ) ສະໄໝວິສາມັນຄັ້ງທີ 2/2020 ໄດ້ຈັດຂຶ້ນໃນວັນທີ 03 ກຸມພາ 2020 ເວລາ 09:30 ໂມງ ທີ່ຊັ້ນ 3 ໂຮງແຮມ ຄອນທິເນັນໂທ ພລາຊາ, ບ້ານ ໜອງ ບົວທອງໃຕ້, ເມືອງ ສີໂຄດຕະບອງ, ນະຄອນຫຼວງວຽງຈັນ, ສປປ ລາວ, ພາຍໃຕ້ການເປັນປະທານຂອງ ທ່ານ ສີທອງ ພິມ ມະຈິດ ເຊິ່ງມີສະມາຊິກສະພາບໍລິຫານ ແລະ ຜູ້ທີ່ກ່ຽວຂ້ອງເຂົ້າຮ່ວມ. ກອງປະຊຸມໄດ້ພິຈາລະນາ ແລະ ມີມະຕິເຫັນດີເປັນ ເອກະພາບກັນດັ່ງນີ້:

1. ຮັບຮອງການແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກ ບໍລິສັດ ພຣາຍສ໌ວໍເຕີ້ເຮົ້າກຸບເປີສ (ລາວ) ຈຳກັດຜູ້ດຽວ ເປັນຜູ້ ກວດສອບສຳລັບປີ 2019 ໂດຍມີຄ່າຈ້າງເປັນຈຳນວນເງິນບໍ່ເກີນ 35,690 ໂດລາສະຫາລັດ ໃຫ້ນຳສະເໜີຕໍ່ກອງ ປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2018 ພິຈາລະນາ ແລະ ຮັບຮອງ;
2. ກຳນົດວາລະກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2018, ມີລາຍລະອຽດດັ່ງນີ້:
   ວາລະທີ 1: ລາຍງານຜົນການຈັດຕັ້ງປະຕິບັດມະຕິກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີຜ່ານມາ ເພື່ອຊາບ;
   ວາລະທີ 2: ພິຈາລະນາ ແລະ ຮັບຮອງບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2017;
   ວາລະທີ 3: ພິຈາລະນາ ແລະ ຮັບຮອງບົດລາຍງານຜົນການດຳເນີນງານຂອງບໍລິສັດ ປະຈຳປີ 2018 ແລະ ເອກະສານລາຍງານການເງິນທີ່ຜ່ານການກວດສອບແລ້ວຂອງບໍລິສັດ ປະຈຳປີ 2018;
   ວາລະທີ 4: ພິຈາລະນາການບໍ່ຈ່າຍເງິນປັນຜົນ ປະຈຳປີ 2018 ເນື່ອງມາຈາກບໍລິສັດຂາດທຶນຈາກການດຳເນີນງານ;
   ວາລະທີ 5: ພິຈາລະນາ ແລະ ຮັບຮອງແຜນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2019;
   ວາລະທີ 6: ພິຈາລະນາ ແລະ ຮັບຮອງການແຕ່ງຕັ້ງຜູກວດສອບພາຍນອກປະຈຳປີ 2019.
3. ກຳນົດສະຖານທີ່ຈັດກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2018 ທີ່ຫ້ອງປະຊຸມໃຫຍ່ ຊັ້ນ 8, ອາຄານຕະຫຼາດຫຼັກ ຊັບລາວ, ບ້ານ ໂພນທັນ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງ ຈັນ, ສປປ ລາວ.

ດັ່ງນັ້ນ, ຈຶ່ງຮຽນລາຍງານມາຍັງທ່ານ ເພື່ອຊາບ.

ດ້ວຍຄວາມເຄົາລົບ ແລະ ນັບຖືຢ່າງສູງ
ປະທານສະພາບໍລິຫານ

ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ Phousy Construction and Development Public Company

ສີທອງ ພິມມະຈິດ

1 | ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ, ຊັ້ນ 3, ໂຮງແຮມ ຄອນທິເນັນໂທ ພລາຊາ, ບ້ານ ໜອງບົວທອງໃຕ້, ເມືອງ ສີໂຄດຕະບອງ, ນະຄອນຫລວງວຽງຈັນ, ສປປ ລາວ. Tel/Fax: (856-21) 265 394; E-mail: info@pcdlao.com; website: www.pcdlao.com